**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------===000===------


ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6


ເລກທີ: 2 0 0 4 0 1 4 /ມທທຊ
ນະຄອນຫຼວງວຽງຈັນ, ວັນທີ: 23 ເມສາ 2020

# ແຈ້ງການ

ຮຽນ: ບັນດາທ່ານຜູ້ຖືຮຸ້ນ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ເລື່ອງ: ເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ເລື່ອງຕໍ່ເວລາ ແລະ ການແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການແຜ່ລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ Covid-19
- ອີງຕາມ ໜັງສືເຊີນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019, ສະບັບເລກທີ 2004002/ມທທຊ, ລົງວັນທີ 3 ເມສາ 2020;
- ອີງຕາມ ໜັງສືແຈ້ງການເລື່ອງການເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ສະບັບເລກທີ 0035/ສຄຄຊ, ລົງວັນທີ 22 ເມສາ 2020

ເພື່ອປະຕິບັດຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ເລື່ອງການຕໍ່ເວລາ ແລະ ການແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ Covid-19 ແລະ ໜັງສືແຈ້ງການເລື່ອງການເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ສະບັບເລກທີ 0035/ສຄຄຊ, ລົງວັນທີ 22 ເມສາ 2020 ສະນັ້ນ, ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ແລະ ນັກລົງທຶນ ເພື່ອຊາບວ່າ ບໍລິສັດ ໄດ້ຈະເລື່ອນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ເຊິ່ງກຳນົດເປີດກອງປະຊຸມໃນວັນທີ 24 ເມສາ 2020 ເລື່ອນອອກໄປເປັນ ວັນທີ 29 ພຶດສະພາ 2020 ເວລາ 09:30ໂມງ ຢູ່ທີ່ ຄອນເວັນຊັນ ເຊັນເຕີ, ຊັ້ນ4, ຫ້ອງໄຂ່ມຸກ ໂຮງແຮມ ແລນມາກ ແມ່ຂອງ ລິເວີໄຊ໌ ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ. ສຳລັບມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ ແລະ ຮັບເງິນປັນຜົນແມ່ນຍັງຮັກສາໄວ້ຕາມເດີມ. ການເລື່ອນກອງປະຊຸມດັ່ງກ່າວຈະບໍ່ມີຜົນກະທົບໃດໆ ຕໍ່ສິດທິຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມປະຊຸມ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ຂໍອະໄພມານະໂອກາດນີ້ດ້ວຍ.

ຜູ້ອຳນວຍການໃຫຍ່

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ມານິບ ຕຣີສິດວິໄລ)